ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 829 /ຫສນຍ.ກສສ

ນະຄອນຫຼວງວຽງຈັນ, ວັນທີ 13 - 6 - 2016

ກົມພາສີ
ເລກທີ 6440
ວັນທີ 20 JUN 2016

ວຽກການເງິນ
ເລກ 11:33
ວັນເຂົ້າ 15/6/2016
ທີ່ເຂົ້າ 1688

## ແຈ້ງການ

ຮຽນ:- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງ ການເງິນ ທີ່ນັບຖື. ✓

- ທ່ານ ລັດຖະມົນຕີ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ທ່ານ ລັດຖະມົນຕີ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ.
- ທ່ານ ລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ.
- ທ່ານ ລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ.

ເລື່ອງ: ການຂໍອະນຸຍາດນຳເຂົ້າວັດຖຸດິບ ປະເພດໝໍ້ໄຟເກົ່າ, ແຜງວົງຈອນຂອງເຄື່ອງເອເລັກໂຕຼນິກ ຈຳນວນ 58 ຕູ້ຄອນເທນເນີ, ຂອງບໍລິສັດ ໄທເກັງ ຟື້ນຟູຊັບພະຍາກອນໂລຫະ ຈຳກັດ.

- ອີງຕາມ ເອກະສານລາຍງານ ຂອງຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ສະບັບເລກທີ 25/ຄຂພສ, ລົງວັນທີ 14/03/2016.

- ອີງຕາມ ຜົນກອງປະຊຸມປຶກສາຫາລືຮ່ວມກັນລະຫວ່າງຂະແໜງການສ່ວນກ່ຽວຂ້ອງຢູ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຄັ້ງວັນທີ 20/05/2016.

- ອີງຕາມ ການຕົກລົງ ແລະ ຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 08/06/2016.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: 1/- ໃຫ້ໂຈະຊົ່ວຄາວການຜະລິດ ຫຼື ປຸງແຕ່ງຄືນໃໝ່ ຈາກໝໍ້ໄຟເກົ່າ ແລະ ສິ່ງເສດເຫຼືອທາງເອເລັກໂຕຣນິກ ຂອງບັນດາໂຮງງານຕ່າງໆ ໃນທົ່ວປະເທດ ລວມທັງໂຮງງານທີ່ຢູ່ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແລະ ບໍ່ໃຫ້ອະນຸຍາດສ້າງຕັ້ງໂຮງງານປະເພດດັ່ງກ່າວ ເພີ່ມອີກ.

2/- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບພາກສ່ວນກ່ຽວຂ້ອງ ຮີບຮ້ອນແຕ່ງຕັ້ງຄະນະສະເພາະກິດ ກວດກາບັນດາໂຮງງານດັ່ງກ່າວ ໂດຍສະເພາະກວດກາດ້ານມາດຕະຖານ ແລະ ສານພິດຕ່າງໆທີ່ເປັນອັນຕະລາຍ, ແລ້ວໃຫ້ບັນດາໂຮງງານດຳເນີນການປັບປຸງໃຫ້ໄດ້ມາດຕະຖານ ແລະ ໃຫ້ມີບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ຖືກ

ຮັບຮອງຈາກພາກສ່ວນກ່ຽວຂ້ອງ. ຫຼັງຈາກນັ້ນ ໃຫ້ລາຍງານຜົນການກວດກາໃຫ້ລັດຖະບານ ຊາບ ແລະ ມີທິດຊີ້ນຳໃນຂັ້ນຕໍ່ໄປ.

3/- ບໍ່ເຫັນດີໃຫ້ນຳເຂົ້າໝໍ້ໄຟເກົ່າ ແລະ ສິ້ນສ່ວນເສດເຫລືອທາງເອເລັກໂຕຣນິກ ອີກ ເພາະມັນສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ຊີວິດ ແລະ ສິ່ງແວດລ້ອມ. ສ່ວນທີ່ໄດ້ນຳເຂົ້າມາກ່ອນໜ້ານັ້ນແລ້ວ ຈຳນວນ 46 ຕູ້ຄອນເທນເນີ ໃຫ້ກັກມ້ຽນໄວ້ ຢູ່ສະຖານທີ່ເໝາະສົມ ແລະ ບໍ່ໃຫ້ນຳມາໃຊ້, ຜະລິດ ຫຼື ປຸງແຕ່ງອີກ. "

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ນາຍົກ-ບັນດາຮອງນາຍົກ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ກອງເລຂາ ຄຂພສ | 01 ສະບັບ |
| - ຄະນະ ທສນຍ ທ່ານ ລຊ | 01 ສະບັບ |
| - ກົມສັງລວມເສດຖະກິດ | 01 ສະບັບ |
| - ບໍລິສັດ ໄຫເກັງ ຟື້ນຟູຊັບພະຍາກອນໄລທະ ຈຳກັດ | 01 ສະບັບ |
| - ເກັບມ້ຽນ | 01 ສະບັບ |